ໂຄງການເງິນລ້ຽງ
ລູກຂອງຣັດວໍຊິງຕັນ



ກໍ່ຕັ້ງຄວາມເປັນພໍ່ແມ່ເພື່ອເຫັນແກ່ລູກຂອງທ່ານ...

# ສິ່ງທີ່ພໍ່ແມ່ທຸກໆ ຄົນຄວນຈະຮູ້ຈັກ

ພໍ່ແມ່ທຸກໆຄົນຄວນຈະມີສ່ວນຊ່ວຍໃຫ້ສຳລັບຄວາມຕ້ອງການຂອງລູກຂອງເຂົາເຈົ້າ.ເດັກນ້ອຍທຸກໆຄົນສົມຄວນທີ່ຈະຮູ້ຈັກພໍ່ແມ່ຕຶກຕ້ອງຕາມກົດຫມາຍຂອງເຂົາເຈົ້າແລະທີ່ຈະທວງເອົາສິດທິແລະສະວັດດີການທີ່ມານຳຄວາມຮັບຮູ້ອັນນີ້.

Washington State
Department of Social & Health Services
*Transforming lives*

## ເປັນຫຍັງຂ້ອຍຈຶ່ງຄວນຈະກໍ່ຕັ້ງຄວາມເປັນພໍ່ແມ່?

ມັນສຳຄັນທີ່ຈະກໍ່ຕັ້ງຄວາມສັມພັນທາງກົດຫມາຍລະຫວ່າງພໍ່ແມ່ແລະເດັກນ້ອຍ. ການພິຈາລະນາເບິ່ງພໍ່ແມ່ຖືກຕ້ອງຕາມກົດຫມາຍຈະມີຜົນປະໂຍດໃຫ້ແກ່ເດັກນ້ອຍ. ຜົນປະໂຍດເຫລົ່ານີ້ບາງຢ່າງແມ່ນ:

- ສວັດດີການຂອງຣັດຖະບານເຊັ່ນວ່າເງິນປະກັນພັຍສັງຄົມແລະຄົນຫວັງເພິ່ງນັກຣົບເກົ່າອາດຈະມີໄວ້ໃຫ້ເດັກນ້ອຍ.
- ການຄຸ້ມກັນການປິ່ນປົວສຸຂະພາບສຳລັບເດັກອາດຈະມີໄວ້ໃຫ້ໂດຍຜ່ານໂຄງການສຸຂະພາບຂອງພໍ່ແມ່.
- ນະໂຍບາຍປະກັນພັຍຊີວິດແລະເງິນມູນມໍຣະດົກອື່ນໆສາມາດມີໄວ້ໃຫ້.
- ທ່ານຫມໍປະຈຳຄອບຄົວສາມາດຊ່ວຍເດັກນ້ອຍໄດ້ດີກວ່າເກົ່າເມື່ອເວລາເຂົາເຈົ້າຮູ້ຈັກປະວັດພະຍາບານຂອງຄອບຄົວທັງຫມົດຂອງເດັກ.
- ພໍ່ແມ່ໃຫ້ການອູ້ມຊູທາງດ້ານຈິດໃຈແລະການເງິນ.

## ຂ້ອຍສາມາດກໍ່ຕັ້ງຄວາມເປັນພໍ່ແມ່ໄດ້ຢ່າງໃດ?

ມັນມີຫລາຍໆຫົນທາງທີ່ຈະກໍ່ຕັ້ງຄວາມເປັນພໍ່ແມ່ຖືກຕ້ອງຕາມກົດຫມາຍ.

- **ການແຕ່ງງານຫລືການມີສ່ວນຢູ່ນຳກັນທີ່ລົງທະບຽນ**

  ຖ້າຫາກວ່າເດັກເກີດມາໃນລະຫວ່າງການແຕ່ງງານຫລືການມີສ່ວນຢູ່ນຳກັນທີ່ລົງທະບຽນ,ດັກຈະຖືກເຊື່ອວ່າເປັນເດັກຂອງການແຕ່ງງານຫລືການມີສ່ວນຢູ່ນຳກັນອັນນັ້ນ. ອັນນີ້ກໍ່ໃຫ້ເກີດມີ"ການເຊື່ອວ່າເປັນຈິງໃນການເປັນພໍ່ແມ່ { .ການເຊື່ອວ່າເປັນຈິງອັນນີ້ສາມາດຜ່ານຜ່າໄປໂດຍການຮັບຮູ້ສາຍເລືອດພໍ່ລູກທີ່ຖືກຍື່ນຢ່າງຖືກຕ້ອງຫລືຄຳສັ່ງຈາກສານ.

- **ການຮັບຮູ້ຄວາມເປັນພໍ່ແມ່**

  ການຮັບຮູ້ຄວາມເປັນພໍ່ແມ່ແມ່ນແບບການຕາມກົດຫມາຍທີ່ອະນຸຍາດໃຫ້ຄວາມເປັນພໍ່ແມ່ຖືກກໍ່ຕັ້ງຂຶ້ນມາໂດຍສະມັກໃຈໂດຍບໍ່ຕ້ອງໄດ້ໄປສານ.ການຮັບຮູ້ຄວາມເປັນພໍ່ແມ່ໄດ້ຖືກເຊັນຊື່ໃສ່ໂດຍພໍ່ແມ່ກຳເນີດຂອງເດັກແລະບຸກຄົນຜູ້ທີ່ຢາກຈະກໍ່ຕັ້ງຄວາມເປັນພໍ່ແມ່.ໃບຟອມສາມາດຖືກເຊັນຊື່ໃສ່ໂດຍພໍ່ແມ່ເຊື້ອພັນທີ່ຖືກກ່າວຫາ,ພໍ່ແມ່ທີ່ເຊື່ອວ່າເປັນຈິງ,ຫລືພໍ່ແມ່ຜ່ານການສືບພັນທີ່ຖືກຊ່ວຍເຫລືອ.ກົດຫມາຍຂອງຣັດຈະຖືວ່າບຸກຄົນຜູ້ທີ່ເຊັນຊື່ໃສ່ໃບຟອມຈະເປັນພໍ່ແມ່ຂອງເດັກນ້ອຍຕາມກົດຫມາຍ.ພໍ່ແມ່ກຳເນີດທັງສອງຄົນແລະອີກຄົນນຶ່ງຜູ້ທີ່ປະສົງຢາກໃຫ້ຄວາມເປັນພໍ່ແມ່ຖືກກໍ່ຕັ້ງຂຶ້ນຕ້ອງເຊັນຊື່ໃສ່ໃບຟອມແລະຟອມຕ້ອງຖືກຕີກາຢັ້ງຢືນລາຍເຊັນ. ມັນຕ້ອງຖືກຍື່ນນຳກົມ Department of Health, Center for Health Statistics (DOH/CHS) ຂອງຣັດວໍຊິງຕັນ.ໂຮງພະຍາບານສາມາດເອົາໃບຟອມແລະລາຍລະອຽດໃຫ້, ການບໍຣິການຢັ້ງຢືນລາຍເຊັນ,ແລະສົ່ງໃບຟອມໄປຫາDOH/CHS ໃຫ້ທ່ານ.DOH/CHS ຈະບົ່ງຊື່ພໍ່ແມ່ຜູ້ທີ່ເຊັນຊື່ໃສ່ໃບຟອມວ່າເປັນພໍ່ຕາມກົດຫມາຍຫລືພໍ່ແມ່ຢູ່ໃນໃບລາຍເກີດ.

- **ຄຳສັ່ງຈາກສານ**

  ນອກຈາກການດຳເນີນການຄວາມເປັນພໍ່ແມ່ຕາມສະມັກໃຈແລ້ວ,ສານຈະພິຈາລະນາເບິ່ງຄວາມເປັນພໍ່ແມ່ຕາມກົດຫມາຍ.

# ການກໍ່ຕັ້ງຄວາມເປັນພໍ່ແມ່ໂດຍການ ໃຊ້ໃບຟອມຮັບຮູ້ຄວາມເປັນພໍ່ແມ່

## ເປັນຫຍັງຂ້ອຍຈຶ່ງຄວນຈະເຊັນຊື່ໃສ່ໃບຟອມຄວາມເປັນພໍ່ແມ່

ໃບຟອມແມ່ນຫົນທາງໃນຣາຄາຕໍ່າ,ຖືກຕ້ອງຕາມກົດຫມາຍເພື່ອຈະກໍ່ຕັ້ງຄວາມເປັນພໍ່ແມ່.ເຊັນຊື່ໃສ່ໃບຟອມເທົ່ານັ້ນຖ້າຫາກວ່າທ່ານແນ່ໃຈວ່າທ່ານຢາກຈະເປັນພໍ່ແມ່ຕາມກົດຫມາຍຂອງເດັກ.

## ຂ້ອຍສາມາດເຊັນຊື່ໃສ່ໃບຟອມຮັບຮູ້ຄວາມເປັນພໍ່ແມ່ຢູ່ໃສ?

ພໍ່ແມ່ສ່ວນຫລາຍເຊັນຊື່ໃສ່ໃບຟອມຢູ່ໂຮງພະຍາບານ,ຄລີນິກຄອດລູກ,ຫລືຢູ່ເຮືອນພາຍໃຕ້ການເບິ່ງແຍງດູແລຂອງນາງຜະດຸງຄັນ.

- ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອ,ໂຮງພະຍາບານ,ນາງຜະດຸງຄັນ,ຫລືພະນັກງານຂອງຄລີນິກຄອດລູກສາມາດຕອບຄໍາຖາມຂອງທ່ານໄດ້,ຊ່ວຍເຫລືອທ່ານຂຽນປະກອບໃບຟອມ,ຕີກາປັ້ງປືນລາຍເຊັນຫລືເປັນພະຍານໃບຟອມ,ແລະສົ່ງຟອມໄປຫາDOH/CHS. ຫ້ອງການ DCS, ທະນາຄານແລະກົມອະນາມັຍທ້ອງຖິ່ນຍັງສາມາດຕີກາປັ້ງປືນໃບຟອມໄດ້ອີກຄືກັນ.
- ຖ້າຫາກວ່າທ່ານເຊັນຊື່ໃສ່ໃບຟອມຮັບຮູ້ຄວາມເປັນພໍ່ແມ່ພາຍໃນ 5 ວັນຂອງການເກີດຂອງລູກຂອງທ່ານ,ທ່ານບໍ່ຕ້ອງໄດ້ຈ່າຍເງິນຄ່າທໍານຽມເພື່ອຈະຍື່ນໃບຟອມ.
- ຖ້າຫາກວ່າທ່ານບໍ່ເຊັນຊື່ໃສ່ໃບຟອມຢູ່ໂຮງພະຍາບານ,ທ່ານສາມາດຂໍເອົາໃບຟອມໄດ້ຢູ່ຕາມກົມອະນາມັຍຂອງຄາວຕີທ້ອງຖິ່ນຂອງທ່ານຫລືຫ້ອງການຂອງຜະແນກເກັບເງິນລ້ຽງເດັກ (DCS) ບ່ອນໃດບ່ອນນຶ່ງ.ພະນັກງານຂອງ DCS ຈະເປັນພະຍານຫລືຕີກາປັ້ງປືນໃບຟອມ.ຖ້າຫາກວ່າທ່ານເຊັນຢູ່ຫ້ອງການ DCS. DCS ຈະສົ່ງໃບຟອມເພື່ອຈະຍື່ນແລະຈ່າຍຄ່າທໍານຽມສໍາລັບການຍື່ນ. ໂທຫາຜະແນກDCSໄດ້ທີ່ 800-442-KIDS (5437) ແລະຂໍໃຫ້ຜູ້ຕ້ອນຮັບແຂກສົ່ງໃບຟອມໄປໃຫ້ທ່ານ.

## ຂ້ອຍສາມາດເອົາໂກປີຂອງໃບຟອມຄວາມເປັນພໍ່ແມ່ຂອງຂ້ອຍໄດ້ບໍ່?

ໄດ້.ກົມ Department of Health (DOH) ດໍາເນີນການແລະເກັບຮັກສາເອົາໄວ້ບັນທຶກທາງການຂອງໃບຟອມຄວາມເປັນພໍ່ແມ່ທີ່ໄດ້ຖືກຍື່ນແລ້ວ.ທ່ານສາມາດພິມໃບຄໍາສັ່ງໄດ້ທີ່ www.doh.wa.gov ເພື່ອຈະສັ່ງເອົາຫນັງສືພິສູດຄວາມເປັນພໍ່ແມ່ຫລືໃບໂກປີຂອງໃບຟອມຄວາມເປັນພໍ່ແມ່ທີ່ໄດ້ຖືກຍື່ນແລ້ວທີ່ກ່ຽວຂ້ອງນໍາ.ໂທຫາ DOH/CHS ໄດ້ທີ່ເລກ 360-236-4300 ຖ້າມີຄໍາຖາມແນວໃດ.ຄ່າທໍານຽມການດໍາເນີນການຂອງຈະຖືກເກັບເອົາ.

## ສິດທິຕາມກົດໝາຍຂອງຂ້ອຍແມ່ນຫຍັງແດ່ເມື່ອເວລາຂ້ອຍເຊັນຊື່ໃສ່ໃບຟອມຮັບຮູ້ຄວາມເປັນພໍ່ແມ່?

ເມື່ອເວລາທ່ານເຊັນຊື່ໃສ່ໃບຟອມ,ກົດໝາຍຂອງຣັດຖະບານກາງບອກວ່າທ່ານຕ້ອງໄດ້ຮັບລາຍລະອຽດທັງທາງໜັງສືແລະທາງປາກເປົ່າກ່ຽວກັບສິດທິແລະຄວາມຮັບຜິດຊອບຂອງທ່ານ.ໃບແຈ້ງການກ່ຽວກັບສິດທິແລະຄວາມຮັບຜິດຊອບຂອງທ່ານແມ່ນຢູ່ໜ້າ 2 ຂອງໃບຟອມພາຍໃຕ້ໃບແຈ້ງການຮັບຮູ້.ມັນສຳຄັນວ່າທ່ານເຂົ້າໃຈວ່າມັນເວົ້າຫຍັງ.ໃຫ້ອ່ານຄຳແຈ້ງການແລະເຮັດແນວນຶ່ງຂອງສິ່ງຕໍ່ລົງໄປນີ້:

- ເບິ່ງວີດີໂອຢູ່ໂຮງພະຍາບານ,ຄລີນິກຄອດລູກ,ກົມອະນາມັຍທ້ອງຖິ່ນຂອງທ່ານ,ຫລືຫ້ອງການ DCS ບ່ອນໃດບ່ອນນຶ່ງ.
- ຟັງເບິ່ງລາຍລະອຽດກ່ຽວກັບການຮັບຮູ້ຄວາມເປັນພໍ່ແມ່ອັດຕະໂນມັດໂດຍການໂທຫາເລກ800-356-0463.
- ຂໍໃຫ້ຄົນໃດຄົນນຶ່ງອ່ານໃບແຈ້ງການໃຫ້ທ່ານຟັງ.
- **ຢ່າສູ່ເຊັນຊື່ໃສ່ໃບຟອມຈົນກວ່າທ່ານຈະໄດ້ຮັບແລະເຂົ້າໃຈລາຍລະອຽດທາງໜັງສືແລະທາງປາກເປົ່າທັງສອງຢ່າງ.**

## ຂ້ອຍສາມາດເຊັນຊື່ໃສ່ໃບຟອມຮັບຮູ້ສາຍເລືອດພໍ່ລູກໄດ້ບໍ່ທັງໆທີ່ຂ້ອຍມີອາຍຸຕ່ຳກວ່າ 18 ປີ?

ໄດ້.ໃບຟອມການຮັບຮູ້ຄວາມເປັນພໍ່ແມ່ທີ່ຖືກເຊັນຊື່ໃສ່ໂດຍເດັກນ້ອຍຕ່ຳກວ່າກະສຽນແມ່ນຖືກຕ້ອງຕາມກົດໝາຍ.ກົດໝາຍຂອງຣັດຖືເອົາເດັກນ້ອຍຕ່ຳກວ່າກະສຽນ (ບຸກຄົນອາຍຸຕ່ຳກວ່າ 18 ປີ) ຜູ້ທີ່ເຊັນຊື່ໃສ່ໃບຟອມໃນລະດັບຂອງຄວາມຮັບຜິດຊອບເທົ່າທຽມກັນກັບຜູ້ໃຫຍ່.

## ຖ້າຫາກວ່າຂ້ອຍບໍ່ແນ່ໃຈວ່າຂ້ອຍຢາກຈະເຊັນຊື່ໃສ່ໃບຟອມຮັບຮູ້ຄວາມເປັນພໍ່ແມ່ຫລືບໍ່ເດ?

ເຊັນຊື່ໃສ່ໃບຟອມເທົ່ານັ້ນຖ້າຫາກວ່າທ່ານຮູ້ຈັກແນ່ນອນວ່າທ່ານຢາກຈະກໍ່ຕັ້ງຕາມກົດໝາຍວ່າທ່ານເປັນພໍ່ແມ່ຂອງເດັກ.ທ່ານຄວນຈະເວົ້ານຳທະນາຍຄວາມ.ຖ້າຫາກວ່າທ່ານຕັດສິນໃຈທີ່ຈະບໍ່ເຊັນຊື່ການຮັບຮູ້,ທ່ານສາມາດຮ້ອງຂໍໃຫ້ສານທີ່ຈະກໍ່ຕັ້ງຄວາມເປັນພໍ່ແມ່.ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບການກໍ່ຕັ້ງຄວາມເປັນພໍ່ແມ່,ທ່ານສາມາດໂທຫາພະແນກ DCS. DCS ບໍ່ສາມາດເອົາຄຳແນະນຳທາງດ້ານກົດໝາຍໃຫ້ທ່ານໄດ້.

DCS ມີໂຄງການກວດເບິ່ງສາຍເລືອດພໍ່ລູກໂດຍບໍ່ຄິດຄ່າແນວໃດ.ຄົນສ່ວນຫລາຍໄດ້ຖືກສົ່ງຕໍ່ໄປຫາໂຄງການອັນນີ້ໂດຍໂຮງພະຍາບານບ່ອນທີ່ເດັກເກີດ.ຖ້າຫາກວ່າທ່ານຢາກຈະຮູ້ຈັກວ່າທ່ານມີສິດຫລືບໍ່,ກະຣຸນາຕິດຕໍ່ຫາ DCS Voluntary Paternity Testing Program (VPTP) ໄດ້ທີ່ເລກ 1-800-285-1892.

## ຂ້ອຍສາມາດປ່ຽນໃຈຂອງຂ້ອຍໄດ້ບໍ່ຫລັງຈາກທີ່ຂ້ອຍເຊັນຊື່ໃສ່ໃບຟອມແລ້ວ?

ພໍ່ແມ່ຄົນໃດກໍໄດ້ຜູ້ທີ່ໄດ້ເຊັນຊື່ໃສ່ໃບຟອມຮັບຮູ້ຄວາມເປັນພໍ່ແມ່ຫລືບຸກຄົນຜູ້ທີ່ໄດ້ເຊັນຊື່ໃສ່ໃບຟອມການປະທິເສດຄວາມເປັນພໍ່ແມ່ສາມາດປ່ຽນໃຈຂອງເຂົາເຈົ້າໄດ້ຫລັງຈາກໄດ້ເຊັນຊື່ແລ້ວ.ຄຳເວົ້າຕາມກົດຫມາຍສຳລັບການເອົາຊື່ຂອງທ່ານອອກຈາກບັນທຶກການເກີດແມ່ນ“ຍົກເລີກ”.ທ່ານຕ້ອງໄດ້ຂຽນປະກອບໃບຟອມການຍົກເລີກຄວາມເປັນພໍ່ແມ່ແລະຍື່ນນຳ Department of Health, Center for Health Statistics ເພື່ອຈະຍົກເລີກການຮັບຮູ້ຫລືການປະຕິເສດພາຍໃນສູງສຸດ 60 ວັນຫລັງຈາກວັນທີທີ່ DOH/CHS ຍື່ນໃບຟອມຫລືກ່ອນການຟັງເຣື່ອງນຳສານເທື່ອທຳອິດ,ບໍ່ວ່າແນວໃດເກີດຂຶ້ນກ່ອນ.ທ່ານຈະຕ້ອງໄດ້ຈ່າຍຄ່າທຳນຽມເພື່ອຈະຍື່ນໃບຟອມການປະຕິເສດຄວາມເປັນພໍ່ແມ່ນຳ DOH/CHS.

## ຂ້ອຍຕ້ອງໄດ້ຈ້າງທະນາຍຄວາມບໍ່ເພື່ອຈະຍົກເລີກການຮັບຮູ້ຄວາມເປັນພໍ່ແມ່?

ທ່ານສາມາດຍື່ນໃບຟອມການຍົກເລີກຄວາມເປັນພໍ່ແມ່ໂດຍທ່ານເອງ,ຫລືດ້ວຍຄວາມຊ່ວຍເຫລືອຂອງທະນາຍຄວາມ.ເມື່ອໃບຟອມການຍົກເລີກຄວາມເປັນພໍ່ແມ່ໄດ້ຖືກຍື່ນແລ້ວ,DOH/CHS ຈະເອົາຊື່ຂອງພໍ່ແມ່ຄົນທີສອງອອກຈາກໃບລາຍເກີດ.

## ຖ້າຫາກວ່າຂ້ອຍປ່ຽນໃຈຂອງຂ້ອຍເດແລະ61ມື້ຫລືຫລາຍກວ່າໄດ້ຜ່ານໄປແລ້ວຫລັງຈາກວັນທີທີ່ DOH/CHS ຍື່ນການຮັບຮູ້?

ພໍ່ແມ່ຄົນໃດກໍໄດ້ສາມາດຄັດຄ້ານການຮັບຮູ້ຄວາມເປັນພໍ່ແມ່ຢູ່ໃນສານ.ການປະຕິເສດຄວາມເປັນພໍ່ແມ່ຍັງສາມາດຖືກຄັດຄ້ານໄດ້ອີກຄືກັນຢູ່ໃນສານ.ຖ້າຫາກວ່າທ່ານຍື່ນການຟ້ອງຂຶ້ນສານເພື່ອຈະຄັດຄ້ານການຮັບຮູ້ຫລືການປະຕິເສດ,ມັນມີເຫດຜົນຈຳກັດທີ່ສານຈະຟັງຄະດີຂອງທ່ານ.ທ່ານຈະຕ້ອງໄດ້ພິສູດວ່າທ່ານເຊັນຊື່ໃສ່ໃບຟອມການຮັບຮູ້ຫລືການປະຕິເສດຍ້ອນການສໍ້ໂກງ,ການບັງຄັບ,ຫລືຄວາມຜິດພາດແທ້ຈິງໃນຄວາມຈິງ.ທ່ານມີເວລາພຽງແຕ່4 ປີທີ່ຈະເລີ້ມຕົ້ນການຟ້ອງຮ້ອງເພື່ອຈະຄັດຄ້ານການຮັບຮູ້ຄວາມເປັນພໍ່ແມ່ຢູ່ໃນສານຈາກວັນທີທີ່ມັນໄດ້ຖືກຍື່ນນຳ DOH/CHS.

### ແມ່ນຫຍັງຈະເກີດຂື້ນຖ້າຫາກວ່າແມ່ແຕ່ງງານນຳຄົນໃດຄົນນຶ່ງຫລືຢູ່ໃນການມີສ່ວນຢູ່ນຳກັນທີ່ລົງທະບຽນ?

ຖ້າຫາກວ່າພໍ່ແມ່ກຳເນີດແຕ່ງງານຫລືຢູ່ໃນການມີສ່ວນຢູ່ນຳກັນທີ່ລົງທະບຽນໃນຣະຫວ່າງການຖືພາຕັ້ງທ້ອງ,ຜົວຫລືຂາຄູ່ຢູ່ນຳກັນໄດ້ຖືກເຂົ້າໃຈວ່າ (ເຊື່ອວ່າ) ເປັນພໍ່ແມ່ອີກຄົນນຶ່ງຖ້າຫາກວ່າເດັກນ້ອຍໄດ້ເກີດ:

- ໃນຣະຫວ່າງການແຕ່ງງານຫລືຢູ່ໃນການມີສ່ວນຢູ່ນຳກັນທີ່ລົງທະບຽນ
- ພາຍໃນ 300 ວັນຫລັງຈາກການສິ້ນສຸດໃນການແຕ່ງງານຫລືຢູ່ໃນການມີສ່ວນຢູ່ນຳກັນທີ່ລົງທະບຽນ.

ຖ້າຫາກວ່າຜົວເມັຽຂອງພໍ່ແມ່ກຳເນີດຫລືຂາຄູ່ຢູ່ນຳກັນເຫັນພ້ອມນຳທີ່ຈະປ່ອຍໃຫ້ອີກຄົນນຶ່ງເຊັນຊື່ວ່າເປັນພໍ່ແມ່ຄົນທີສອງ,ບຸກຄົນນັ້ນຈະເຊັນຊື່ໃສ່ໃບຟອມການຮັບຮູ້ຄວາມເປັນພໍ່ແມ່.ຜົວເມັຽຂອງພໍ່ແມ່ກຳເນີດຫລືຂາຄູ່ຢູ່ນຳກັນຕ້ອງເຊັນຊື່ໃສ່ໃບຟອມການປະຕິເສດໃນຄວາມເປັນພໍ່ແມ່ຫລືບໍ່ດັ່ງນັ້ນໃບຮັບຮູ້ຄວາມເປັນພໍ່ແມ່ຈະບໍ່ຖືກຕ້ອງຕາມກົດຫມາຍ.

## ການກໍ່ຕັ້ງຄວາມ
## ເປັນພໍ່ແມ່ຢູ່ໃນສານ

### ເມື່ອໃດສານຄວນຈະກໍ່ຕັ້ງຄວາມເປັນພໍ່ແມ່?

ທ່ານຄວນຈະໄປຂື້ນສານເມື່ອທ່ານເຊື່ອວ່າມັນມີຫລາຍກວ່າພໍ່ຄົນນຶ່ງທີ່ອາດຈະເປັນໄປໄດ້ຫລືພໍ່ແມ່ທີ່ອາດເປັນໄປໄດ້ຄົນອື່ນ.

### ເຫດຜົນແນວອື່ນສຳລັບການໃຊ້ສານເພື່ອຈະກໍ່ຕັ້ງຄວາມເປັນພໍ່ແມ່:

- ຖ້າຫາກວ່າບໍ່ວ່າຈະແມ່ນພໍ່ແມ່ຄົນໃດບໍ່ແນ່ໃຈກ່ຽວກັບການເຊັນຊື່ໃສ່ໃບຟອມການຮັບຮູ້ອັນນີ້.
- ຖ້າຫາກວ່າຜົວຂອງພໍ່ແມ່ກຳເນີດຫລືຂາຄູ່ຢູ່ນຳກັນບໍ່ຍິນດີທີ່ຈະເຊັນຊື່ໃສ່ໃບປະຕິເສດ



## ຂ້ອຍຈະເປີດເອກສານຄວາມເປັນພໍ່ແມ່ຢູ່ໃນສານໄດ້ແນວໃດ?

ຣັດສາມາດກໍ່ຕັ້ງຄວາມເປັນພໍ່ແມ່ສຳລັບລູກຂອງທ່ານຖ້າຫາກວ່າທ່ານຮ້ອງຂໍເອົາການບໍຣິການກໍ່ຕັ້ງຄວາມເປັນພໍ່ລູກນຳພະແນກDCS.ໂທຫາDCS ໄດ້ທີ່ 800-442-KIDS (5437) ຫລືຫ້ອງການ DCS ໃກ້ທີ່ສຸດເພື່ອຣາຍຣະອຽດເພີ້ມເຕີມ.

ຖ້າຫາກວ່າພະແນກ DCS ຮັບເອົາເອກສານຂອງທ່ານ,ພວກເຮົາຈະສົ່ງເອກສານຂອງທ່ານໄປຫາທະນາຍຄວາມຜູ້ພິພາກສາຂອງຄາວຕີ.ຜູ້ພິພາກສາປະຕິບັດຫນ້າທີ່ໃນນາມຂອງລູກຂອງທ່ານແລະບໍ່ສາມາດເປັນຕົວແທນທ່ານຢູ່ໃນສານຫລືເອົາຄຳແນະນຳທາງດ້ານກົດຫມາຍໃຫ້ແກ່ທ່ານ.ຜູ້ພິພາກສາສາມາດຕອບຄຳຖາມທົ່ວໄປກ່ຽວກັບເອກສານຄວາມເປັນພໍ່ແມ່ຂອງທ່ານ.ທ່ານຕ້ອງບອກພວກເຮົາຖ້າຫາກວ່າເດັກນ້ອຍໄດ້ຮັບການຊ່ວຍເຫລືອຂອງຫລວງຫລືການຊ່ວຍເຫລືອພະຍາບານຢູ່.

ພະແນກ DCS ຍັງມີການເຂົ້າເຖິງສານຊົນເຜົ່າບາງບ່ອນອີກຄືກັນເພື່ອຈະກໍ່ຕັ້ງຄວາມເປັນພໍ່ແມ່ຢູ່ໃນເອກສານຊົນເຜົ່າບາງບ່ອນ.

ທ່ານຄວນຈະຖາມທະນາຍຄວາມສຳລັບຄຳຕອບຕໍ່ຄຳຖາມທາງດ້ານກົດຫມາຍແລະສຳລັບການເປັນຕົວແທນຢູ່ໃນສານ.ຖ້າຫາກວ່າທ່ານບໍ່ຕ້ອງການການບໍຣິການຂອງພະແນກ DCS, ທ່ານຫລືທະນາຍຄວາມຂອງທ່ານຈະຍື່ນການຟ້ອງຮ້ອງເຣື່ອງຄວາມເປັນພໍ່ແມ່ນຳສານທີ່ມີສິດອຳນາດໃນກໍຣະນີຂອງທ່ານ.

## ຂ້ອຍຈະກໍ່ຕັ້ງການເປັນພໍ່ແມ່ຢູ່ໃນສານໄດ້ແນວໃດ?

ຖ້າຫາກວ່າຣັດກຳລັງພະຍາຍາມທີ່ຈະກໍ່ຕັ້ງຄວາມເປັນພໍ່ແມ່,ຜູ້ພິພາກສາຂອງຄາວຕີໂດຍທົ່ວໄປແລ້ວຈະສົ່ງເອກສານທາງກົດຫມາຍໃຫ້ພໍ່ທີ່ອາດຈະເປັນໄປໄດຫລືພໍ່ແມ່ຄົນອື່ນທີ່ອາດຈະເປັນໄປໄດ້.ຜູ້ພິພາກສາຫລືສານຈະບົ່ງໃຫ້ແມ່,ພໍ່ຜູ້ທີ່ອາດເປັນໄປໄດ້,ແລະເດັກທີ່ຈະໄດ້ຮັບການກວດເບິ່ງສາຍເລືອດສືບພັນ.ສານອາດຈະອອກຄຳສັ່ງໃຫ້ກໍ່ຕັ້ງການເປັນພໍ່ແມ່.

## ການກວດສາຍເລືອດສືບພັນແມ່ນຫຍັງແລະຂ້ອຍຕ້ອງໄດ້ຖືກກວດເບິ່ງບໍ່?

ຈີນເປັນພາກສ່ວນນຶ່ງຂອງເນື້ອຂອງຮ່າງກາຍຂອງພວກເຮົາ.ມັນນຳເອົາເຊື້ອສາຍສືບພັນຜ່ານມາຈາກພໍ່ແມ່ໄປຫາລູກຂອງເຂົາເຈົ້າ.ການກວດເບິ່ງເຊື້ອສາຍສືບພັນປຽບທຽບປີນໃສ່ກັນ.ຖ້າປີນບາງອັນກົງກັນ,ພໍ່ແມ່ແລະເດັກນ້ອຍແມ່ນມີສາຍສັມພັນນຳກັນ.ການກວດເຊື້ອສາຍສຳລັບຄວາມເປັນພໍ່ແມ່ແມ່ນແນ່ນອນທີ່ສຸດ.

ການກວດເຊື້ອສາຍເບິ່ງຄວາມເປັນພໍ່ແມ່ປຽບທຽບພາກສ່ວນແຕກຕ່າງກັນຂອງເນື້ອຂອງພໍ່,ແມ່,ແລະເດັກທີ່ຖືກເກັບເອົາມາໂດຍການກວດເອົາທາງໃນຂອງປາກຂອງເຂົາເຈົ້າ.ຫ້ອງວິຈັຍການກວດເຊື້ອສາຍເຮັດໃບລາຍງານອອກມາທີ່ອະທິບາຍວ່າຜູ້ຊາຍຄ້າຍຄຽງວ່າຈະເປັນພໍ່ຕາມສາຍເລືອດຫລືບໍ່.ສານສ່ວນຫລາຍແລ້ວບົ່ງໃຫ້ມີການກວດເຊື້ອສາຍເບິ່ງວ່າມັນຈະມີພໍ່ທີ່ອາດຈະເປັນໄປໄດ້ຫລາຍກວ່າຄົນນຶ່ງຫລືບໍ່.

## ມີຄ່າລາຍຈ່າຍແນວໃດບໍ່ເພື່ອຈະກໍ່ຕັ້ງຄວາມເປັນພໍ່ແມ່ຢູ່ໃນສານບໍ່?

- ຖ້າຫາກວ່າຜູ້ພິພາກສາຂອງລາວຕີກໍ່ຕັ້ງຄວາມເປັນພໍ່ແມ່ຢູ່ໃນສານໃນກໍລະນີຂອງ DCS, ທ່ານບໍ່ຕ້ອງໄດ້ຈ່າຍຄ່າທຳນຽມຂອງການຍື່ນ.ມັນອາດຈະມີຄ່າໃຊ້ຈ່າຍແນວອື່ນທີ່ກ່ຽວພັນນຳການກໍ່ຕັ້ງການເປັນພໍ່ແມ່ຢູ່ໃນສານ.
- ຖ້າຫາກວ່າທ່ານຈ້າງທະນາຍຄວາມ,ທ່ານຮັບຜິດຊອບສຳລັບຄ່າທຳນຽມແລະຄ່າໃຊ້ຈ່າຍສານ.
- ສານອາດຈະສັ່ງໃຫ້ພໍ່ແມ່ທີ່ຈະຈ່າຍຄ່າກວດເບິ່ງເຊື້ອສາຍຫລືຄ່າໃຊ້ຈ່າຍສານອື່ນໆ.

# ສິ່ງແນວອື່ນອີກທີ່ທ່ານຕ້ອງການທີ່ຈະຮູ້ຈັກ

## ຂ້ອຍຈະກໍ່ຕັ້ງສິດທິຄວາມເປັນພໍ່ແມ່ໄດ້ແນວໃດເຊັ່ນວ່າຄວາມຄຸ້ມຄອງແລະການປັ້ນຢາມ?

ມີແຕ່ສານເທົ່ານັ້ນສາມາດແກ້ໄຂບັນຫາເລື່ອງຄວາມຄຸ້ມຄອງແລະການປັ້ນຢາມຕາມກົດໝາຍ.ອັນນີ້ໄດ້ຖືກເຮັດນຳແຜນການເປັນພໍ່ແມ່/ຕາຕະລາງເວລາຢູ່ເຮືອນ. ຖ້າຫາກວ່າທ່ານແລະພໍ່ແມ່ອີກຄົນນຶ່ງບໍ່ສາມາດຕັດສິນໃຈໄດ້ກ່ຽວກັບເລື່ອງຄວາມຄຸ້ມຄອງຫລືການປັ້ນຢາມ,ໃຫ້ຕິດຕໍ່ຫາທະນາຍຄວາມ,ຜູ້ໄກ່ເກັ່ຍເຈລະຈາຫລືຜູ້ໃຫ້ຄວາມສະດວກຢູ່ສານ.

- ເພື່ອຈະເວົ້ານຳຜູ້ໄກ່ເກັ່ຍເຈລະຈາ,ໂທຫາWestern Washington Dispute Resolution Centers ໄດ້ທີ່ເລກ 800-280-4770.
- ເພື່ອຈະຊອກຫາຜູ້ໃຫ້ຄວາມສະດວກຢູ່ສານ,ໂທຫາຫ້ອງການສະມຽນຂອງສານສູງສຸດທ້ອງຖິ່ນຂອງທ່ານ.

ເພື່ອລາຍລະອຽດເພີ້ມເຕີມ,ໃຫ້ໂທຫາ DCS ແລະຂໍເອົາປື້ມຄູ່ມືທີ່ມີຊື່ວ່າ, "ຂ້ອຍສາມາດເຮັດຫຍັງໄດ້ແດ່ເພື່ອວ່າຂ້ອຍຈະສາມາດເຫັນລູກຂອງຂ້ອຍຫລືເຫັນເຂົາເຈົ້າຫລາຍເທື່ອກວ່າເກົ່າ?ເງິນລ້ຽງລູກ,ການປັ້ນຢາມແລະຄວາມຄຸ້ມຄອງ."

## ຂ້ອຍສາມາດກໍ່ຕັ້ງຄວາມເປັນພໍ່ແມ່ໄດ້ບໍ່ຖ້າຫາກວ່າພໍ່ແມ່ຄົນນຶ່ງອາສັຍຢູ່ໃນຣັດຕ່າງໆ?

ໄດ້.ພໍ່ແມ່ອາສັຍຢູ່ຣັດອື່ນສາມາດເຊັນຊື່ໃສ່ໃບຟອມການຮັບຮູ້ຄວາມເປັນພໍ່ແມ່.ຣັດອື່ນເຮັດວຽກນຳພະແນກ DCS ທີ່ຈະໄດ້ຄຳສັ່ງຄວາມເປັນພໍ່ແມ່ສຳລັບເດັກນ້ອຍທີ່ເກີດຢູ່ໃນແລະຢູ່ນອກຣັດວໍຊິງຕັນ.

## ແມ່ນໃຜສາມາດຊ່ວຍເຫລືອຂ້ອຍກໍ່ຕັ້ງຄວາມເປັນພໍ່ແມ່ຫລືຕອບຄຳຖາມຂອງຂ້ອຍ?

- ໂທຫາ800-442-KIDS (5437) ຫລືເບິ່ງທາງຫລັງຂອງປຶ້ມຄູ່ມືຫົວນີ້ ສຳລັບເລກໂທຣະສັບຂອງຫ້ອງການ DCS ໃກ້ບ້ານທ່ານ.
- ເວົ້າລົມນຳທະນາຍຄວາມ.
- ໂທຫາCLEAR (Coordinated Legal Education, Advice and Referral system) ໄດ້ທີ່ເລກ 888-201-1014.
- ຖ້າຫາກວ່າທ່ານອາສັຍຢູ່ໃນຄິງຄາວຕີ,ໂທຫາ King County Bar Association ໄດ້ທີ່ 206-623-2551 ເພື່ອຈະຖາມເບິ່ງກ່ຽວກັບຄວາມຊ່ວຍເຫລືອທາງກົດຫມາຍໃນຣາຄາຕ່ຳ.

## ຫ້ອງການ DCS

| | |
|---|---|
| Everett | 800-729-7580<br>425-438-4800 |
| Kennewick | 800-345-9981<br>509-374-2000 |
| Olympia | 800-345-9964<br>360-664-6900 |
| Seattle | 800-526-8658<br>206-341-7000 |
| Spokane | 800-345-9982<br>509-363-5000 |
| Tacoma | 800-345-9976<br>253-597-3700 |
| Vancouver | 800-345-9984<br>360-696-6100 |
| Wenatchee | 800-535-1113<br>509-886-6800 |
| Yakima | 800-441-0859<br>509-249-6000 |
| ສຳນັກງານໃຫຍ່ | 800-457-6202<br>360-664-5000 |
| ອີແມລ໌ | dcs-cru@dshs.wa.gov |

Washington State
Department of Social
& Health Services

*Transforming lives*

DSHS 22-586 LA (Rev. 1/19) Laotian